## ມິຊຊາສະຫລອງພຣະກຣິສໂຕຮັບສີນລ້າງ
## ວັນທີ 9 ມັງກອນ 2022



**ພຣະວໍລະສານໂດຍນັກບຸນລູກາ ລກ 3, 15-16, 21-22**

ໃນເວລານັ້ນ, ປະຊາຊົນກຳລັງຄອງຖ້າຢູ່ຕ່າງພາກັນຄຶດວ່າຢວງນີ້ອາດຈະແມ່ນພຣະກຣິສໂຕກໍບໍ່ຮູ້; ຢວງຈຶ່ງເວົ້າກັບພວກເຂົາວ່າ: "ເຮົາລ້າງພວກເຈົ້າດ້ວຍນໍ້າເທົ່ານັ້ນແຕ່ຍັງມີຜູ້ໜຶ່ງຊົງອຳນາດກວ່າເຮົາ. ເຮົາເອງບໍ່ສົມຈະແກ້ສາຍເກີບຂອງພຣະອົງຊໍ້າ. ພຣະອົງນັ້ນຈະລ້າງພວກເຈົ້າໃນພຣະຈິດເຈົ້າແລະໄຟ".ເມື່ອປະຊາຊົນທັງໝົດຮັບພິທີລ້າງແລ້ວ, ພຣະເຢຊູເຈົ້າກໍຮັບແລ້ວດ້ວຍແລະໃນເວລາພຣະອົງກຳລັງພາວະນາຢູ່, ທ້ອງຟ້າກໍເປີດອອກ ແລະພຣະຈິດເຈົ້າສະເດັດລົງມາເໜືອພຣະອົງເປັນຮູບຊົງຄືນົກກາງແກ. ແລ້ວມີສຽງໜຶ່ງດັງມາຈາກທ້ອງຟ້າວ່າ: "ທ່ານແມ່ນບຸດທີ່ຮັກຂອງເຮົາ, ເຮົາພໍພຣະໄທນຳທ່ານປັນຢ່າງຍິ່ງ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້, ພຣະກຣິສຕະຈັກສະຫລອງພຣະກຣິສໂຕຮັບສິນລ້າງແລະກໍເປັນວັນສະຫລຸບກໍານົດພຣະກຣິສຕະສົມພົບ, ກໍານົດບຸນໂນແອນ.

ກ່ອນບຸນໂນແອນ, ເທວະດາກາບຣີແອນໄດ້ມາແຈ້ງຂ່າວໃຫ້ພຣະນາງມາຣີອາໂດຍກ່າວວ່າ: ຜູ້ທີ່ຈະເກີດມາຈາກອຸທອນຂອງພຣະນາງນັ້ນເປັນບຸດຂອງພຣະເຈົ້າຜູ້ສູງສຸດ. ແລະຕະຫລອດຊ່ວງເວລາແຫ່ງກໍານົດພຣະກຣິສຕະສົມພົບ, ພວກເຮົາກໍໄດ້ເພັ່ງຊົມແລະນົບໄຫວ້ນະມັດສະການພຣະເຢຊູ, ພຣະບຸດຂອງພຣະເຈົ້າທີ່ບັງເກີດເປັນມະນຸດ.

ວັນນີ້, ເມື່ອພຣະເຢຊູເຈົ້າຮັບສິນລ້າງຈາກທ່ານຢວງ, ກໍໄດ້ມີສຽງດັງມາຈາກທ້ອງຟ້າກ່າວຢືນຢັນວ່າ: "ພຣະເຢຊູແມ່ນພຣະບຸດສຸດທີ່ຮັກຂອງເຮົາ". ແນ່ນອນ, ສຽງທີ່ກ່າວມາຈາກທ້ອງຟ້ານີ້ແມ່ນສຽງຂອງພຣະບິດາເຈົ້ານັ້ນເອງ.

ການທີ່ພຣະເຢຊູເປັນບຸດຂອງພຣະເຈົ້ານັ້ນມີຄວາມໝາຍແລະຄວາມສໍາຄັນຫຍັງສໍາລັບພວກເຮົາ?

ການທີ່ພຣະເຢຊູເຈົ້າເປັນພຣະບຸດຂອງພຣະເຈົ້ານັ້ນຊ່ວຍພວກເຮົາໃຫ້ມີຄວາມເຊື່ອຢ່າງໝັ້ນຄົງວ່າພຣະເຢຊູຜູ້ທີ່ພວກເຮົາເຊື່ອນີ້ ພຣະອົງແມ່ນມະນຸດແທ້ແລະກໍແມ່ນພຣະເຈົ້າແທ້ດ້ວຍ. ພຣະອົງບໍ່ໄດ້ເປັນປະພາສົກເໝືອນກັບປະພາສົກທົ່ວໄປທີ່ເປັນຜູ້ປ່າວປະກາດວາຈາພຣະເຈົ້າ, ແຕ່ພຣະອົງເປັນພຣະວາຈາຂອງພຣະເຈົ້າ. ພຣະອົງມາເພື່ອທໍາໃຫ້ພຣະວາຈານັ້ນເກີດໝາກຜົນແລະມີຊີວິດໃນຕົວພວກເຮົາແຕ່ລະຄົນ.

ແລະການທີ່ພຣະເຢຊູເຈົ້າເປັນພຣະບຸດພຣະເຈົ້ານັ້ນຊ່ວຍພວກເຮົາໃຫ້ມີສ່ວນຮ່ວມໃນການເປັນທາຍາດກັບພຣະບິດາເຈົ້າຜ່ານທາງພຣະອົງ. ຫລືເວົ້າອີກຢ່າງ, ພວກເຮົາສາມາດກັບມາເປັນບຸດຂອງພຣະບິດາເຈົ້າສະຫວັນໄດ້ ກໍໂດຍຜ່ານທາງພຣະເຢຊູ, ພຣະບຸດຂອງພຣະອົງນັ້ນເອງ. ດ້ວຍເຫດນີ້, ພຣະເຢຊູເຈົ້າຈຶ່ງກ່າວວ່າ: "ບໍ່ມີໃຜໄປຫາພຣະບິດາເຈົ້າສະຫວັນໄດ້ໂດຍບໍ່ຜ່ານທາງພຣະອົງ".

ເມື່ອພຣະບິດາເຈົ້າສະຫວັນກ່າວຢັ້ງຢືນໃຫ້ພວກເຮົາຮູ້ວ່າພຣະເຢຊູແມ່ນພຣະບຸດສຸດທີ່ຮັກຂອງພຣະອົງໃນວັນຊຶ່ງພຣະເຢຊູຮັບສິນລ້າງນັ້ນກໍເພື່ອບອກໃຫ້ພວກເຮົາຮູ້ວ່າ ຜ່ານທາງສິນລ້າງບາບທີ່ພວກເຮົາໄດ້ຮັບນັ້ນ, ພວກເຮົາກໍໄດ້ກາຍເປັນບຸດສຸດທີ່ຮັກຂອງພຣະບິດາເຈົ້າສະຫວັນເຊັ່ນດຽວກັນ. ນີ້ແລແມ່ນຂໍ້ຄວາມເຊື່ອແລະຄວາມຍິນດີສໍາລັບພວກເຮົາແຕ່ລະຄົນໃນວັນສະຫລອງພຣະກຣິສໂຕຮັບສິນລ້າງນີ້.

**ພາວະນາ**

ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍພວກເຮົາໃຫ້ເຊື່ອຢ່າງໝັ້ນຄົງວ່າ ພຣະເຢຊູຜູ້ລົງມາຮັບເອົາກາຍເປັນມະນຸດນີ້, ພຣະອົງເປັນມະນຸດແທ້ແລະກໍເປັນພຣະເຈົ້າແທ້ດ້ວຍ. ພຣະອົງມາເພື່ອທໍາໃຫ້ພວກເຮົາກາຍເປັນບຸດສຸດທີ່ຮັກຂອງພຣະບິດາໂດຍຜ່ານທາງພຣະອົງນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ